ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 123 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 03.03.2010

# ດຳລັດ
# ວ່າດ້ວຍ ກອງທຶນສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 0115/ອຄ, ລົງວັນທີ 18 ມັງກອນ 2010.

ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການໃນການສ້າງຕັ້ງ, ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອລະດົມທຶນ ແລະ ສະໜອງທຶນເຂົ້າໃນການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວ ແນໃສ່ເພີ່ມທະວີການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ ແລະ ການລຶບລ້າງຄວາມທຸກຍາກ.

**ມາດຕາ 2. ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ**

ກອງທຶນສົ່ງເສີມ ແລະພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ຊຽນຫຍໍ້ວ່າ ***"ທສວ"*** ແມ່ນການຈັດຕັ້ງການເງິນໜຶ່ງຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອລະດົມທຶນ ແລະ ນຳໃຊ້ເຂົ້າໃນ

ການສົ່ງເສີມ ແລະ ຊ່ວຍເຫລືອວິສາຫະກິດຂະໜາດນ້ອຍ ແລະ ກາງ ທາງດ້ານເຕັກນິກວິຊາການ ແລະ ການເຂົ້າຫາແຫລ່ງທຶນ ດ້ວຍຮູບການ ໃຫ້ກູ້ຢືມດອກເບ້ຍຕໍ່າຜ່ານສະຖາບັນການເງິນ, ການໃຫ້ການຄໍ້າປະກັນສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ.

**ວິສາຫະກິດຂະໜາດນ້ອຍ ແລະ ກາງ** ແມ່ນວິສາຫະກິດ ຕາມທີ່ກໍານົດໄວ້ໃນມາດຕາ 2 ແລະ 3 ຂອງດໍາລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 42/ນຍ, ລົງວັນທີ 20 ເມສາ 2004 ຫຼື ຕາມການກໍານົດຂອງລັດຖະບານ ໃນແຕ່ລະໄລຍະ.

### ມາດຕາ 3. ເປົ້າໝາຍຂອງການສ້າງຕັ້ງກອງທຶນ

ທສວ ສ້າງຕັ້ງຂຶ້ນ ເພື່ອ:

1. ລະດົມທຶນຈາກແຫລ່ງຕ່າງໆ ທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດ ເພື່ອນໍາໃຊ້ເຂົ້າໃນວຽກງານສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແນໃສ່ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ສັງຄົມມີຄວາມສະຫງົບ ໂດຍການສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້ໃຫ້ປະຊາຊົນຢ່າງກວ້າງຂວາງ ແລະ ໝັ້ນຄົງ;
2. ສະໜອງທຶນໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ບໍ່ສາມາດເຂົ້າຫາແຫລ່ງທຶນ ຍ້ອນບໍ່ມີຫລັກຊັບ, ມີຫລັກຊັບບໍ່ພຽງພໍ ຫລື ອື່ນໆ ເພື່ອໃຫ້ມີທຶນນໍາໃຊ້ເຂົ້າໃນການພັດທະນາ ຫລື ຂະຫຍາຍກິດຈະການຢ່າງມີປະສິດທິພາບ;
3. ຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫລືອວິສາຫະກິດຂະໜາດນ້ອຍ ແລະ ກາງ ທາງດ້ານເຕັກນິກວິຊາການ ແລະ ເຕັກໂນໂລຊີ ເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ, ບໍລິຫານ, ການຜະລິດ, ການບໍລິການ, ການເຂົ້າຫາຕະຫລາດ ແລະ ອື່ນໆ.

### ມາດຕາ 4. ຫຼັກການບໍລິຫານ ທສວ

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທສວ ຈະຕ້ອງມີການສະຫຼຸບ, ກວດກາ ແລະ ຕີລາຄາເປັນປະຈໍາ ຕາມສົກປີງົບປະມານ, ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະ ນໍາໃຊ້ກອງທຶນ, ແນໃສ່ເພື່ອປັບປຸງ ແລະ ແກ້ໄຂວຽກງານ ທສວ ໃຫ້ບັນລຸຕາມເປົ້າໝາຍ ແລະ ມີປະສິດທິຜົນສູງສຸດ.

## ໝວດທີ II
## ລະບຽບການເງິນຂອງກອງທຶນ

### ມາດຕາ 5. ແຫລ່ງທຶນ

ແຫລ່ງທຶນ ຂອງ ທສວ ໄດ້ມາຈາກ:

1. ການຊ່ວຍເຫລືອລ້າ;
2. ການກູ້ຢືມຈາກພາຍໃນ ຫລື ຕ່າງປະເທດ;

3. ການບໍລິຈາກ ຫລື ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງດ້ວຍຄວາມສະໝັກໃຈ;
4. ງົບປະມານຂອງລັດ;
5. ແຫລ່ງອື່ນໆ ຕາມການອະນຸມັດຂອງລັດຖະບານ.

**ມາດຕາ 6. ເປົ້າໝາຍການນຳໃຊ້**

ທສວ ຈະຖືກນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້ :

1. ສະໜອງທຶນໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນຕໍ ດ້ວຍຮູບການໃຫ້ກູ້ຢືມດອກເບ້ຍຕ່ຳຜ່ານສະຖາບັນການເງິນ, ຄ້ຳປະກັນສິນເຊື່ອ, ຮ່ວມລົງທຶນ ແລະ ອື່ນໆ;

2. ສະໜັບສະໜູນບັນດາໂຄງການ ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ລວມທັງການຊ່ວຍເຫລືອດ້ານວິຊາການ, ການໃຫ້ຄຳປຶກສາ, ຈັດຝຶກອົບຮົມ ແລະ ອື່ນໆ.

**ມາດຕາ 7. ລາຍຮັບ ແລະ ລາຍຈ່າຍ**

ລາຍຮັບຂອງ ທສວ ມີດັ່ງນີ້ :

1. ດອກເບ້ຍເງິນຝາກ, ດອກເບ້ຍປ່ອຍເງິນກູ້ ຜ່ານສະຖາບັນການເງິນ, ຄ່າທຳນຽມຄ້ຳປະກັນສິນເຊື່ອ ແລະ ເງິນປັນຜົນຈາກການຮ່ວມລົງທຶນ ຂອງ ທສວ;

2. ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ.

ລາຍຈ່າຍຂອງ ທສວ ມີດັ່ງນີ້:

1. ຄ່າໃຊ້ຈ່າຍບໍລິຫານຂອງຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຜະລິດຕະພາບແຫ່ງຊາດ;

2. ຄ່າໃຊ້ຈ່າຍບໍລິຫານຂອງ ທສວ, ລວມທັງການບຳລຸງ ແລະ ກໍ່ສ້າງພະນັກງານ ຂອງ ທສວ;

3. ເງິນນະໂຍບາຍ ແລະ ຄ່າບຳເນັດ ຂອງສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ແລະ ພະນັກງານຂອງ ທສວ;

4. ຄ່າຈ້າງຊ່ຽວຊານ ສະເພາະໃດໜຶ່ງ ໃນກໍລະນີຈຳເປັນ;

5. ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວພັນກັບການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ.

**ມາດຕາ 8. ແຜນລາຍຮັບ-ລາຍຈ່າຍຂອງ ທສວ**

ສະພາບໍລິຫານ ທສວ ເປັນຜູ້ພິຈາລະນາຕົກລົງແຜນລາຍຮັບ-ລາຍຈ່າຍປະຈຳປີຂອງ ທສວ ແລ້ວສະເໜີໃຫ້ ລັດຖະບານ ເປັນຜູ້ຕົກລົງຮັບຮອງເອົາ.

**ມາດຕາ 9. ການຖືບັນຊີ ແລະ ບັນຊີເງິນຝາກຂອງ ທສວ**

ທສວ ຕ້ອງຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ແລະ ຕ້ອງເປີດບັນຊີເງິນຝາກຂອງຕົນໄວ້ຢູ່ສະຖາບັນການເງິນ ຢູ່ ສປປ ລາວ.

**ມາດຕາ 10. ການຖອນເງິນຈາກບັນຊີຂອງ ທສວ**

ການຖອນເງິນຈາກບັນຊີຂອງ ທສວ ຕ້ອງຖອນດ້ວຍ "ແຊັກ" ຊຶ່ງມີລາຍເຊັນຂອງຜູ້ອຳນວຍການ ທສວ ຫລືຜູ້ທີ່ໄດ້ຮັບມອບສິດ.

**ມາດຕາ 11. ການດຸ່ນດ່ຽງເງິນທຶນ**

ການນຳໃຊ້ເງິນຂອງກອງທຶນຈະຕ້ອງບໍ່ເກີນຈຳນວນເງິນທີ່ ທສວ ມີຢູ່ ແລະ ມີຄວາມສົມດຸນກັບລາຍຮັບທີ່ຈະເຂົ້າມາສູ່ ທສວ ໃນສົກປີງົບປະມານນັ້ນ. ເມື່ອຮອດທ້າຍປີສົກງົບປະມານຕ້ອງຍົກເງິນທີ່ຍັງເຫຼືອໃນ ທສວ ເຂົ້າໃນງົບປະມານສົກປີຕໍ່ໄປ.

## ໝວດທີ III

## ການຄຸ້ມຄອງບໍລິຫານ ທສວ

**ມາດຕາ 12. ອົງການຄຸ້ມຄອງບໍລິຫານ ທສວ**

ອົງການຄຸ້ມຄອງບໍລິຫານ ທສວ ປະກອບດ້ວຍ:

- ສະພາບໍລິຫານ;
- ຜູ້ອຳນວຍການ;
- ກອງເລຂາ ທສວ.

**ມາດຕາ 13. ສະພາບໍລິຫານ**

ສະພາບໍລິຫານປະກອບດ້ວຍ ສະມາຊິກ ທີ່ຕາງໜ້າຈາກກະຊວງ ແລະ ອົງການທີ່ກ່ຽວຂ້ອງຕາມທີ່ກຳນົດໄວ້ໃນມາດຕາ 14 ຂອງດຳລັດສະບັບນີ້. ສະພາບໍລິຫານ ມີພາລະບົດບາດໃນການຊີ້ນຳ ແລະ ຕິດຕາມກວດກາການຄຸ້ມຄອງບໍລິຫານກອງທຶນ ໃຫ້ສອດຄ່ອງກັບ ລະບຽບກົດໝາຍ ແລະ ເປົ້າໝາຍຂອງກອງທຶນ.

**ມາດຕາດ 14. ໂຄງປະກອບ ຂອງສະພາບໍລິຫານ**

ສະພາບໍລິຫານ ປະກອບດ້ວຍ 7 ທ່ານ:

1. ລັດຖະມົນຕີຊ່ວຍວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ.
2. ຜູ້ຕາງໜ້າ ກະຊວງການເງິນ ເປັນຮອງປະທານ.
3. ຜູ້ຕາງໜ້າ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ.
4. ຜູ້ຕາງໜ້າ ຄະນະເລຂາທິການລັດຖະບານ ເປັນຄະນະ.
5. ຜູ້ຕາງໜ້າ ທະນາຄານແຫ່ງ ສປປ ລາວ ເປັນຄະນະ.
6. ຜູ້ຕາງໜ້າ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ.
7. ຫົວໜ້າຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຄະນະ ແລະ ເປັນຜູ້ອຳນວຍການ ທສວ.

**ມາດຕາ 15. ການແຕ່ງຕັ້ງ, ປົດຕຳແໜ່ງ ແລະ ອາຍຸການຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ, ກາງ ແລະ ຜະລິດຕະພາບແຫ່ງຊາດ, ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສະມາຊິກສະພາບໍລິຫານ ມີອາຍຸການ 3 ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດນະໂຍບາຍ, ລະບຽບການໃນການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານຂອງ ທສວ;
2. ພິຈາລະນາຮັບຮອງ ແຜນການເຄື່ອນໄຫວ, ແຜນລາຍຮັບ-ລາຍຈ່າຍຂອງ ທສວ ປະຈຳປີ ແລະ ມາດຕະການຈັດຕັ້ງປະຕິບັດແຜນການດັ່ງກ່າວ;
3. ກຳນົດຂອບເຂດສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ ທສວ ແລະ ກອງເລຂາ ພ້ອມທັງຊີ້ນຳການເຄື່ອນໄຫວວຽກງານຂອງພວກກ່ຽວ;
4. ພິຈາລະນາອະນຸມັດການສະໜອງທຶນ ແລະ ຮ່ວມລົງທຶນ ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ;
5. ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ທຶນ ຂອງ ທສວ;
6. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ;
7. ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຄຸ້ມຄອງບໍລິຫານ ທສວ;
8. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການດຳເນີນງານຂອງ ທສວ ທີ່ສະເໜີໂດຍຜູ້ອຳນວຍການ ທສວ ແລ້ວລາຍງານໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຜະລິດຕະພາບແຫ່ງຊາດ, ນາຍົກລັດຖະມົນຕີ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.
9. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ສະມາຊິກສະພາບໍລິຫານ ບໍ່ມີເງິນເດືອນ ແຕ່ຈະໄດ້ຮັບເບ້ຍປະຊຸມຕາມລະບຽບການ.

**ມາດຕາ 17. ກອງປະຊຸມສະພາບໍລິຫານ**

ສະພາບໍລິຫານ ຕ້ອງດຳເນີນກອງປະຊຸມ ຢ່າງໜ້ອຍສາມເດືອນຕໍ່ໜຶ່ງຄັ້ງ ຊຶ່ງຕ້ອງມີສະມາຊິກສະພາບໍລິຫານ ທສວ ເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງ ຈຶ່ງສາມາດປະຊຸມໄດ້, ໃນກໍລະນີຈຳເປັນ ແລະ ຮີບດ່ວນ ກອງປະຊຸມສະພາບໍລິຫານ ສາມາດເປີດຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມ ໂດຍປະທານສະພາບໍລິຫານ ຫລື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ສາມຄົນຂຶ້ນໄປ.

ມະຕິຂອງກອງປະຊຸມສະພາບໍລິຫານຈະມີຜົນໃຊ້ໄດ້ ກໍຕໍ່ເມື່ອມີຄະແນນສຽງສ່ວນຫລາຍ ໂດຍຖືເອົາ ໜຶ່ງຄົນຕໍ່ໜຶ່ງສຽງ.

ໃນກໍລະນີ ທີ່ປະທານ ບໍ່ຢູ່ ຫລື ຕິດຂັດ ແມ່ນໃຫ້ຮອງປະທານ ຜູ້ທີ່ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການກອງທຶນ**

ຜູ້ອຳນວຍການ ທສວ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຮັບຜິດຊອບຕໍ່ສະພາບໍລິຫານ ໃນການຄຸ້ມຄອງວຽກງານປະຈຳວັນຂອງກອງທຶນ ຕາມນະໂຍບາຍ, ນະຕິຂອງສະພາບໍລິຫານ ແລະ ສອດຄ່ອງກັບລະບຽບກົດໝາຍ;
2. ຄົ້ນຄວ້າແຜນການເຄື່ອນໄຫວ, ແຜນລາຍຮັບ ລາຍຈ່າຍປະຈຳປີ ແລະ ແຜນດຳເນີນງານເພື່ອນຳສະເໜີຕໍ່ສະພາບໍລິຫານ;
3. ພິຈາລະນາອະນຸມັດ ການນຳໃຊ້ທຶນ ຂອງ ທສວ ຕາມຂອບເຂດສິດ ທີ່ສະພາບໍລິຫານກຳນົດໃຫ້;
4. ຮັບສະໝັກ, ຄັດເລືອກ ແລະ ບັນຈຸຊັບຊ້ອນພະນັກງານ ເຂົ້າເຮັດວຽກໃນ ທສວ ຕາມການເຫັນດີ ຂອງສະພາບໍລິຫານ;
5. ຄັດເລືອກ ແລະ ວ່າຈ້າງທີ່ປຶກສາ ຫລື ຊ່ຽວຊານ ເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງຫາກ ເຫັນວ່າມີຄວາມຈຳເປັນ;
6. ສ້າງບົດລາຍງານປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ສົ່ງໃຫ້ສະພາບໍລິຫານກ່ອນກອງປະຊຸມສະພາບໍລິຫານ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 19. ກອງເລຂາ**

ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເຮັດໜ້າທີ່ເປັນກອງເລຂາ ທສວ, ມີພາລະບົດບາດຊ່ວຍວຽກສະພາບໍລິການ ແລະ ຮັບຜິດຊອບຕໍ່ຜູ້ອຳນວຍການໃນການຄຸ້ມຄອງບໍລິຫານ ທສວ.

ສິດ ແລະ ໜ້າທີ່ຂອງ ກອງເລຂາ ຈະກຳນົດໄວ້ໃນລະບຽບການຕ່າງຫາກ ໂດຍສະພາບໍລິຫານ ທສວ.

## ໝວດທີ IV
## ການກວດສອບ ແລະ ລາຍງານ

**ມາດຕາ 20. ການກວດສອບບັນຊີ**

ບັນຊີຂອງ ທສວ ຕ້ອງໄດ້ຮັບການກວດສອບພາຍໃນຢ່າງເປັນປົກກະຕິ ໂດຍສະພາບໍລິຫານກອງທຶນ ຕາມລະບຽບການບໍລິຫານກອງທຶນ ແລະ ການກວດສອບປະຈຳປີ ໂດຍອົງການກວດສອບແຫ່ງລັດ ຕາມກົດໝາຍວ່າດ້ວຍການກວດສອບ. ໃນກໍລະນີຈຳເປັນ ອາດມີການກວດສອບ ໂດຍຜູ້ກວດສອບອິດສະລະ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ.

**ມາດຕາ 21. ການກວດກາສະເພາະກິດ**

ນາຍົກລັດຖະມົນຕີ ສາມາດແຕ່ງຕັ້ງບຸກຄົນ ຫຼື ໜ່ວຍງານ ເພື່ອດຳເນີນການກວດກາສະເພາະກິດ ຕໍ່ການເຄື່ອນໄຫວວຽກງານຂອງອົງການຄຸ້ມຄອງ ທສວ. ໃນກໍລະນີພົບເຫັນການກະທຳຜິດ ຜູ້ລະເມີດ ຈະມີຄວາມຮັບຜິດຊອບຕາມກົດໝາຍ.

**ມາດຕາ 22. ການລາຍງານ**

ສະພາບໍລິຫານ ຕ້ອງສົ່ງບົດລາຍການເຄື່ອນໄຫວ ປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ພ້ອມດ້ວຍບົດລາຍງານການກວດສອບບັນຊີ ໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຜະລິດຕະພາບ ແຫ່ງຊາດ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ຄະນະເລຂາທິການລັດຖະບານ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 23. ເຄື່ອງໝາຍ ແລະ ກາປະທັບ**

ກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມີເຄື່ອງໝາຍ ແລະ ກາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 24. ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຜະລິດຕະພາບ ແຫ່ງຊາດ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 25. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ **ສປປລາວ**

ບົວສອນ ບຸບຜາວັນ